# ມິຊຊາອາທິດທີ 14 ກຳນົດທຳມະດາ ປີ B
## ວັນທີ 08 ກໍລະກົດ 2018



**ພຣະວໍລະສານໂດຍນັກບຸນມັກໂກ 6, 1-6**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດໄປບ້ານເກີດຂອງພຣະອົງ, ພວກສາວົກກໍຕິດຕາມໄປດ້ວຍ. ພໍເຖິງວັນເສົາ, ພຣະອົງກໍລົງມືສັ່ງສອນຢູ່ໃນໂຮງທັມ. ຄົນທັງຫລາຍທີ່ມາຟັງກໍມີຄວາມແປກປະຫລາດໃຈເວົ້າກັນວ່າ: ເພິ່ນຮູ້ເລື່ອງເຫລົ່ານີ້ມາແຕ່ໃສ? ຄວາມຮູ້ຄວາມສະຫລາດນີ້ແມ່ນໃຜປະທານໃຫ້ເພິ່ນ? ແລະການອັດສະຈັນທີ່ເພິ່ນກະທຳນັ້ນແມ່ນຢ່າງໃດ? ເພິ່ນບໍ່ແມ່ນຊ່າງໄມ້ບຸດຂອງນາງມາຣີອາບໍ? ບໍ່ແມ່ນພີ່ນ້ອງກັບຢາໂກເບ, ຢໍແຊ, ຢູດາ ແລະຊີມອນບໍ? ແລະພວກເອື້ອຍນ້ອງຂອງເພິ່ນບໍ່ແມ່ນຢູ່ບ້ານດຽວກັບພວກເຮົາບໍ? ພວກເຂົາເລີຍຖືເອົາພຣະອົງເປັນສະດຸດ.

ພຣະເຢຊູເຈົ້າຊົງກ່າວກັບພວກເຂົາວ່າ: ປະພາສົກບໍ່ມີໜ້າມີຕາຢູ່ບ້ານເກີດ ໃນຄອບຄົວແລະຢູ່ເຮືອນຂອງຕົນ. ແລ້ວພຣະອົງກໍບໍ່ໄດ້ທຳການອັດສະຈັນຢ່າງໃດ. ພຣະອົງໄດ້ປິ່ນປົວຄົນເຈັບລາງຄົນແລະປົກມືໃຫ້ເຂົາ. ພຣະອົງມີຄວາມແປກປະຫລາດພຣະໄທຍ້ອນເຫັນພວກເຂົາຂາດຄວາມເຊື່ອ. ແລ້ວກໍສະເດັດໄປສັ່ງສອນຕາມໝູ່ບ້ານທີ່ຢູ່ໃກ້ໆ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 6, 1-6**

ວາຈາຂອງພຣະເຈົ້າໃນວັນອາທິດນີ້ທີ່ພວກເຮົາຫາກໍໄດ້ຟັງ ເຕັມໄປດ້ວຍຄໍາຖາມຂອງຝູງຊົນທີ່ມາຟັງພຣະເຢຊູເຈົ້າເທດສອນໃນໂຮງທັມ. ຍ້ອນຄໍາເທດສອນຂອງພຣະເຢຊູເຈົ້າແຕກຕ່າງໄປຈາກພວກນັກປາດແລະອາຈານພຣະຄໍາພີ. ດັ່ງນັ້ນພວກເຂົາຈຶ່ງມີຄວາມແປກປະຫລາດໃຈ. ແຕ່ສິ່ງທີ່ແປກປະຫລາດໃຈໄປກວ່ານັ້ນຄືຝູງຊົນຄິດວ່າພວກເຂົາຮູ້ຈັກພຣະເຢຊູເຈົ້າດີ ເພາະພຣະອົງກໍເປັນຄົນສາມັນແລະເປັນໄທບ້ານດຽວກັບພວກເຂົາ. ເມື່ອພຣະເຢຊູເຈົ້າມີສະພາບຊີວິດເໝືອນກັບຄົນທົ່ວໄປໃນໝູ່ບ້ານນາຊາແລັດເພິ່ນກໍບໍ່ມີຫຍັງແຕກຕ່າງໄປຈາກຄົນອື່ນ. ຄວາມຄິດນີ້ເຮັດໃຫ້ຝູງຊົນຢຸດຢູ່ແຕ່ສິ່ງທີ່ພວກເຂົາເຫັນແລະພວກເຂົາຮູ້. ແລະບໍ່ພະຍາຍາມຊອກຫາເພື່ອຮູ້ຈັກແລະເຂົ້າໃຈຄໍາເທດສອນແລະກິດຈະການອັດສະຈັນທີ່ພຣະເຢຊູເຈົ້າຊົງກະທໍາ. ແທນທີ່ພຣະເຢຊູເຈົ້າຈະເປັນທີ່ຮູ້ຈັກສໍາລັບເພື່ອນບ້ານມິດສະຫາຍຂອງພຣະອົງ, ພຣະອົງກັບກາຍເປັນຄົນທີ່ບໍ່ມີໃຜຮູ້ຈັກ. ແທນທີ່ຜູ້ຄົນທີ່ມາຟັງພຣະເຢຊູເຈົ້າເທດສອນເປີດໃຈເພື່ອຮັບເອົາວາຈາຂອງພຣະອົງ, ພວກເຂົາພັດປິດໃຈຕົວເອງໄວ້ແລະບໍ່ເຊື່ອໃນພຣະອົງ. ດັ່ງນັ້ນພຣະເຢຊູເຈົ້າບໍ່ສາມາດກະທໍາອັດສະຈັນແຕ່ຢ່າງໃດເລີຍ. ສິ່ງເຫລົ່ານີ້ສະທ້ອນໃຫ້ພວກເຮົາເຫັນຫຍັງ? ແລະຢາກສອນພວກເຮົາຫຍັງໃນຊີວິດກຣິສຕັງຂອງພວກເຮົາ?

ໃນຊີວິດຄວາມເຊື່ອຂອງພວກເຮົາ, ເປັນຕົ້ນບັນດາຜູ້ທີ່ໄດ້ຮັບຄວາມເຊື່ອມາຈາກປູ່ຍ່າຕານາຍ, ຈາກພໍ່ແມ່ທີ່ເປັນກຣິສຕັງເດີມ, ພວກເຮົາຄິດວ່າພວກເຮົາຮູ້ຈັກພຣະເຢຊູເຈົ້າພຽງພໍຜ່ານທາງຄໍາສອນກຣິສຕັງທີ່ພວກເຮົາສຶກສາແລະໄດ້ຮັບການຖ່າຍທອດຈາກພໍ່ແມ່, ປູ່ຍ່າຕານາຍຂອງພວກເຮົາ. ສິ່ງນີ້ເຮັດໃຫ້ພວກເຮົາຢຸດຢູ່ແຕ່ສິ່ງທີ່ພວກເຮົາຮູ້ແລະເຫັນ ແລະພວກເຮົາບໍ່ຢາກສືບຕໍ່ໃນການຊອກຫາພຣະເຢຊູເຈົ້າຕື່ມອີກໃນວາຈາຂອງພຣະອົງ. ຜົນສະທ້ອນທີ່ຕາມມາຄືຊີວິດຄວາມເຊື່ອຂອງພວກເຮົາຈະຄ່ອຍຫ່ຽວແຫ້ງໄປແລະດວງໃຈຂອງພວກເຮົາກໍຈະຄ່ອຍແຂງກະດ້າງຂຶ້ນ. ເພາະພວກເຮົາບໍ່ໄດ້ຮັບການຫລໍ່ລ້ຽງດ້ວຍວາຈາຂອງພຣະເຈົ້າ. ສິ່ງນີ້ບໍ່ພຽງແຕ່ເປັນອຸປະສັກເຮັດໃຫ້ພວກເຮົາຫ່າງໄກຈາກພຣະເຈົ້າເທົ່ານັ້ນ, ແຕ່ມັນຍັງເຮັດໃຫ້ພວກເຮົາຫ່າງໄກຈາກເພື່ອນພີ່ນ້ອງຂອງພວກເຮົາອີກດ້ວຍ. ຍ້ອນຫຍັງ? ຍ້ອນຖ້າພວກເຮົາເຊື່ອໃນສິ່ງທີ່ພວກເຮົາເຫັນພາຍນອກເທົ່ານັ້ນ, ພວກເຮົາກໍຈະເບິ່ງແລະຕັດສິນຄົນອື່ນໃນສິ່ງທີ່ພວກເຮົາເຫັນແລະສໍາພັດໄດ້ພາຍນອກເຊັ່ນດຽວກັນ. ສິ່ງນີ້ເຮັດໃຫ້ພວກເຮົາບໍ່ສາມາດຄົ້ນພົບຄວາມຈິງ,ຄວາມດີແລະຄວາມງາມຂອງບຸກຄົນທີ່ພວກເຮົາພົບໃນຊີວິດຂອງພວກເຮົາ.

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ຊ່ວຍພວກເຮົາໃຫ້ມີຄວາມຄິດແລະຄວາມເຂົ້າໃຈນັບມື້ນັບເລິກເຊິ່ງຂຶ້ນໃນຕົວຂອງພຣະເຢຊູເຈົ້າຜ່ານທາງວາຈາຂອງພຣະອົງ. ແລະຜ່ານທາງວາຈາແຫ່ງຄວາມຮັກແລະຊົງຊີວິດນີ້ຈະຊ່ວຍພວກເຮົາໃຫ້ເຂົ້າໃຈຕົວເອງແລະຄົນອື່ນດີຂຶ້ນ. ເພື່ອພວກເຮົາຈະບໍ່ຕັດສິນຄົນອື່ນໃນສິ່ງທີ່ພວກເຮົາເຫັນພາຍນອກ ແຕ່ໃນຄຸນງາມຄວາມດີແລະໃນສິ່ງທີ່ເຂົາເປັນຢ່າງແທ້ຈິງ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ